


Le roman lao de Panay : Je pense à mon passé, à présent, à notre avenir et je pense à toi...

ພໍ ຣົຖແລ່ນເຂົ້າຮອດຫົວບ້ານ ອັນບໍ່ລື້ງຕານີ້ ຂ້າພະເຈົ້າກໍຕັ້ງ ເຄົ້າຄຶດພໍ້ຄວາມເກົ່າແກ່ ຂອງບ້ານແຫ່ງນີ້ ຂື້ນມາທັນທີ ຂ້າພະເຈົ້າເຄີຍຄູ້ມ ກັບຖິ່ນແຫ່ງນີ້ດີ ຕັ້ງແຕ່ຈື່ ຄວາມໄດ້ພູ້ນລະ ແຕ່ວ່າ ມັນຫາກກາຍເປັນ ສິ່ງບໍ່ລື້ງຕາ ເພາະດຽວນີ້ ຂ້າພະເຈົ້າ ຕ້ອງຄອຍຖ້າ ເປັນປີ ໆ ຈື່ງໄດ້ຫວນ ຄືນມາເຫັນມັນອີກ ແລະ ແຕ່ລະປີ ທີ່ຄືນມາ ຢາມບ້ານ ຂ້າພະເຈົ້າຈະພໍ້ກັບຄວາມໃຫມ່ ຂອງມັນສເມີ ທຸກປີທີ່ມາ ມັນກໍປ່ຽນແປງ ທຸກປີ

ຫຼຽວເບິ່ງນຳແຄມທາງເທິງສອງຂ້າງ ເຕັມໄປດ້ວຍຕຶກດິນອິດ ດິນຈີ່ ປັ່ງຂຶ້ນ ປານຣຸ່ນໄຮ່ ຍາມຝົນ ແຕ່ກ່ອນມັນບໍ່ເປັນແນວນີ້ ຂ້າພະເຈົ້າຈຶ່ງເວົ້າໄດ້ວ່າ ບ່ອນໂນນທີ່ເປັນຮ້ານຂາຍເຝີນັ້ນ ເມື່ອສິບປາຍປີກ່ອນພຸ້ນ ເປັນໂນນຫມາກຂີ້ຫຽ້າ ມີກົກຫມາກທັນໃຫຍ່ ຢູ່ກົກນຶ່ງ ທີ່ພວກເຮົາເດັກນ້ອຍ ໃນສມັຍນັ້ນ ມັກມາໂຮມກັນ ເອົານ້ຳປາແດກມາກິນສົ້ມ ຢ່າງແຊບນົວ

ແລະຕໍ່ລົງໄປອີກ ເກືອບຕີນດົງ ທີ່ມີໂພນຢູ່ຫຼາຍຫນ່ວຍ ມີກົກຫມາກຂາມປ່າ ຢູ່ຫຼາຍ ກົກ ຊຶ່ງນ້າບ່າວ ມັກເອົາຄ້ອນດີກ ໄປນຳທຸກມື້ເມື່ອອອກໄປກ່ຽວເຂົ້າ.... ລາວເອົາໄປໃສ່ກ້ອຍ ປາຂາວທຸບເປືະ ທີ່ພໍ່ໄປປາມມອງໄດ້ມາສົດ ໆ ລາງມື້ ພໍ່ ບອກໃຫ້ຂ້າພະເຈົ້າ ແລ່ນໄປປີນຂຶ້ນ ເອົາຍອດຂົມກະເດົາ ມາລວກກິນກັບກ້ອຍປາ ພວກເຮົາເດັກນ້ອຍ ບໍ່ມັກກິນເພາະມັນຂົມ ແຕ່ພໍ່ຕູ້ມັກເວົ້າວ່າ ຂົມຫັ້ນລະເປັນຢາ

ເລີກເຂົ້າໄປເປັນດົງທີ່ມີໄມ້ປ່ານາ ໆ ພັນ ພາໃຫ້ຂ້າພະເຈົ້າຄຶດຮອດດົງ ຄຶດຮອດຫມາກ ຫມ້ອຍ ທີ່ແມ່ເຄີຍພາໄປເກັບມາຂົ້ວແຫ້ງ ໆ ແລ້ວຕົ້ມອີກ ລາງມື້ແມ່ກໍຕາມໃຈລູກ ໂດບຍອມສລະເວລາ ສລະເຫື່ອແຮງ ໄປເກັບເລັມເຕັມຕ່າ ຫາບຈົນໄມ້ຄານແອ່ນ ຕົ້ມສຸກແລ້ວ ກໍເອົາຖ້ວບອີ່ຕັ່ງໃຫຍ່ ໆ ມາຕັກ ໃຫ້ຂ້າພະເຈົ້າເອົາໄປສົ່ງເຮືອນພໍ່ຕູ້

ຢູ່ດອນທາງຫົວນອນ (ທິດເຫນືອ) ມີປ່ານ້ອຍ ໆ ຮົ່ມເຢັນ ມີຫໍຮ້າງ ໆ ຢູ່ໃນປ່າຫັ້ນ ແຕ່ທາງໄປກໍແປນດີ ມີຄົນເອົາເຫຼົ້າເອົາໄກ່ຕົ້ມ ໄປແກ້ບະຜີປູ່ບ້ານທຸກ ໆ ວັນພຸດ ມື້ຂ້າພະເຈົ້າຊິ ເສັງແຊກ (ປະກາສນິຍະບັດປະຖົມສຶກສາບໍຣິບູນ) ພໍ່ ກໍ ໄປບະໃຫ້ເສັງໄດ້ ເມື່ອຄາວໄປຮຽນ ເມືອງນອກ ເພິ່ນກໍບະໃຫ້ອີກ

ຣົຖຂ້າພະເຈົ້າແລ່ນເລີຍຕຶກແຖວຍ່ານນັ້ນມາຮອດວັດ .... ວັດອັນເກົ່າແກ່ !

ຂ້າພະເຈົ້າເຊື່ອແລະຄຶດຈັ່ງຊັ້ນ ເພາະຕັ້ງແຕ່ຈື່ຄວາມມາ ກໍເຫັນວ່າມີກຸຕິຫຼັງນີ້ ມີສາລາ ຫໍແຈກຫຼັງນີ້ ຫໍກອງກໍຮ້າງ ໆ ຫຼັງນີ້ລະ ນ້ຳສ້າງກໍຍັງຢູ່ບ່ອນເກົ່າ ຕ່າງແຕ່ວ່າດຽວນີ້ ມີທໍ່ຊີມັງ ຢ່າງດີ

ຂ້າພະເຈົ້າຄຶດຮອດຍາມເປັນເດັກນ້ອຍ ເຄີຍມາແລ່ນຫຼິ້ນ ຢ່າງສນຸກສນານ ລາງເທື່ອ ຫມາກມີ້ ຫມາກມ່ວງສຸກ ພວກເຮົາກໍພາກັນໄປຍໍມືນົບ ຂໍນຳເຈົ້າພໍ່ ຜູ່ເຖົ້າ ແລະ ໃຈດີ ຂ້າພະເຈົ້າ ຍັງຈື່ໄດ້ ຮອດວ່າມີ

ເທື່ອນຶ່ງ ດ້ວຍຄວາມຄຶດຄນອງ ອັນບໍ່ຮູ້ດຽງສາ ພວກເຮົາຫຼາຍ ຄົນ ພາກັນໄປລັກຂຶ້ນກິນໝາກສີດາ ແລ້ວຂ້າພະເຈົ້າ ກໍຕົກກົກໝາກສີດາຈົນແຄ້ນ ຈົນທິດຈວງໄດ້ມາຈັບສັ່ນ ແລ້ວພີ່ອ້າຍ ເປັນຜູ້ແລ່ນຫາຊື້ເປັດມາປາດຄໍ ເອົາເລືອດໃຫ້ກິນ ທຳອິດ ທິດຈວງບອກວ່າເອົາຍ່ຽວໃຫ້ກິນ ຫູຂ້າພະເຈົ້າໄດ້ຍິນວ່າຍ່ຽວ ເຖິງຊິຢູ່ໃນຄວາມຈຸກ ເຈັບປາງຕາຍນັ້ນ ກໍຍັງດື້ດຶງບໍ່ຢາກກິນ ກະຂອງວ່ານ້ຳຍ່ຽວນໍ ໃຜຊິກິນລົງ ບັກສັງ (ດຽວນີ້ເປັນ ພ.ຕ.ຕ. ແລ້ວ) ຍ່ຽວຢ່າງໄວໃສ່ກະໂປະໝາກພ້າວ ມາໃຫ້ ຂ້າພະເຈົ້າຢາກບໍ່ອອກ ເພາະຍັງແຄ້ນຢູ່ ໄດ້ແຕ່ກັດແຂ້ວໄອ້ແຫມ້ນ ໆ ແມ່ແລ່ນມາຮອດເຫັນຂ້າພະເຈົ້າ ບໍ່ອ້າປາກກໍມາງັດຄາງກະໃຕໃຫ້ອ້າ ຂ້າພະເຈົ້າແຮງກົດໄອ້ແຮງ ແມ່ຜູ້ຮັກແລະຫ່ວງຂ້າພະເຈົ້າ ປານຊີວິດ ໄຫ້ຂຶ້ນໂກກ ໆ ພ້ອມກັບຮ້ອງບໍ່ເປັນສຽງຄືນວ່າ

- ບັກທິດຈວງ ລູກກູຄາງແຂງໝົດແລ້ວ ເອົານ້ຳມາເປົ່າໄວແມ້ !

ໃນທີ່ສຸດ ນ້ຳໃນກະໂປະນັ້ນ ກໍໄຫຼເຂົ້າປາກຈົນໄດ້ ຫືຍ ! ບໍ່ຢາກເວົ້າ ຂ້າພະເຈົ້າຟ້າວ

ຖົ່ມ ນ້ຳລາຍ ເທິງບັງຈຸກຍັງເຈັບຢູ່ນັ້ນລະ ພີ່ອ້າຍຄ່ອຍໄດ້ເປັດມາ ເລືອດເປັດກໍຍັງພໍກິນໄດ້ແດ່ ເພາະເຖິງແມ່ນເປັນເດັກນ້ອຍ ກໍ ເຄີຍກິນລາບເລືອດມາແລ້ວ ເດັກນ້ອຍບ້ານນອກກິນ ໄດ້ ໝົດ ນັ້ນລະ ແລ້ວມື້ນັ້ນເພິ່ນກໍຕົ້ມເປັດໃຫ້ກິນອີກ ແຕ່ຄ່ານັ້ນມາຫຼາບປານຕອນແມວ ເພາະຜູ້ເຖົ້າເພິ່ນວ່າ ລັກຂອງວັດມັນບາບ ເທື່ອລຸນຄັນແມ່ນມັນ ອິດບໍ່ລົ້ນທົນບໍ່ໄດ້ສາແທ້ ໆ ກໍພາກັນນັ່ງລົງ ຍໍມືມາທາງກຸຕິ ກ່າວອອກສຽງດັງ ໆ ວ່າ

" ສາທຸເດີ ຫົວພໍ່ເຈົ້າວັດ ພວກຂ້ານ້ອຍຂໍກິນໝາກສີດາແດ່ " ແລ້ວຟ້າວປິດຟ້າວລົງ

ຂ້າພະເຈົ້າຄຶດວ່າເຮັດແນວນີ້ ຄືຊິບໍ່ບາບ ເພາະຈັ່ງໃດ ໆ ກະແປວ່າເຮົາຂໍເພິ່ນແລ້ວ

ເມື່ອຣົຖແລ່ນເລີຍວັດໄປອີກໜ້ອຍດຽວ ກໍແມ່ນໂຮງຮຽນ

*ບ່ອນນີ້ລະ ທີ່ຂ້າພະເຈົ້າຮູ້ຈັກວ່າ ສະລະ າ ໃສ່ໂຕ ປ ອ່ານວ່າ ປາ*

*ບ່ອນນີ້ລະ ທີ່ສອນໃຫ້ເຮົາຮູ້ຈັກໂຕ ກ ຮອດໂຕ ຮ*

ສມັຍນັ້ນມີຮຽນກັນຢູ່ສາມຫ້ອງ ລູກສິດໝົດໂຮງຮຽນ ສອງສາມບ້ານ ໂຮມກັນ

ແລ້ວບໍ່ຮອດຮ້ອຍ ແຕ່ວ່າໝົດທັງສາມຫ້ອງ ມີນາຍຄຣູຜູ້ດຽວເຖົ້າ ໆ ມາໂຮງຮຽນ ສວາຍຈົນງາຍແກ່

ແຕ່ເພິ່ນກໍຊ້ຽວເຂັນ ຈົນລູກສິດຕາດໍາ ໆ ຂອງເພິ່ນອ່ານອອກຂຽນໄດ້ ຈົນໄດ້ເປັນເຈົ້າຄົນນາຍຄົນ ກໍນັບບໍ່ຖ້ວນ
ຣຸ່ນໃຫຍ່ກວ່າຂ້າພະເຈົ້າກໍມີ ເຊັ່ນ ທ່ານ ພ.ທ. ສຽວນ ພ.ຕ. ເສັງ ອະທິບໍດີຄໍາຕັນ ຣ.ທ. ໃຈ ຣ.ອ. ໂຣມ ທ່ານແພງ
ໂອ້ຍນັບບໍ່ ໄຫວດອກ ! ຣຸ່ນດຽວກັນຫໍມີ ຣຸ່ນນ້ອງກໍມີ *ເປັນເຈົ້າເປັນນາຍ ກະຈັກກະຈາຍກັນຢູ່ທົ່ວ*
*ແຕ່ວ່າໂຮງຮຽນ ຮ້າງ ໆ ຢູ່ຄືເກົ່າ ນາຍຄຣູຜູ່ເຖົ້າ ກໍລາຈາກໂລກໄປແລ້ວ ນີ້ລະທີ່ມັນເສົ້າ*

*ຂ້າພະເຈົ້າຕ້ອງເສົ້າໃຈ ເມື່ອຄຶດຮອດຄວາມເກົ່າແກ່ອັນມີ ຄຸນຄ່າ*

*ຂອງ ໂຮງຮຽນ* ມັນເປັນສິ່ງທີ່ຊວນສັງເວດໃຈຍິ່ງຫນັກ ໃນເມື່ອຜູ່ທີ່ກ້າວເຂົ້າມາໃນ ນັ້ນ
ໄດ້ຜ່ານມັນອອກໄປສູ່ຄວາມກ້າວຫນ້າ ສູ່ຄວາມມັ່ງມີເປັນດີ ມີກຽດກໍນັບເປັນພັນ ໆ ຄົນ ພຽງແຕ່ຄົນເຫຼົ່ານັ້ນ
ຈະພ້ອມໃຈກັນຊີ້ໄມ້ແປ້ນຄົນລະແຜ່ນ ຊີມັງຄົນລະກິໂລ ດິນຊາຍຄົນລະ ປິດ ຕາປູຄົນລະກໍາມື
ໂຮງຮຽນອັນປຽບເຫມືອນໄມ້ງອຍຝັ່ງນີ້ ກໍຈະກັບ ຂື້ນມາເປັນສິ່ງ ຖາວອນ ຈົບງາມ ແລະ ຫມັ້ນຄົງ ຈະຊ
ັກຈູງໃຫ້ເດັກນ້ອຍ ຊຶ່ງຈະເປັນຜູ່ໃຫຍ່ໃນອະນາຄົດ ມີອົກມີໃຈໃນການຮໍ່າຮຽນ ຫຼາຍຂື້ນ

*ຂ້າພະເຈົ້າ ຍິ່ງເສົ້າໃຈຫຼາຍກວ່ານັ້ນອີກ ເມື່ອຄຶດເຖິງເງິນເຫຼືອໃຊ້ທີ່*

*ພວກເຮົາ ຈັບຈ່າຍໄປໃນການຟູມເຟືອຍຕ່າງ ໆ ຢ່າງ ກິນເຫຼົ້າ ໃນບາຣ໌ ຫຼິ້ນໄພ້ ຊື້ເບີ* ແລະ
*ທ່ຽວສໍາຊ່ອນນັ້ນ* ມັນຫຼາຍເກີນພໍຊໍ້າອີກ ຖ້າເຮົາຊິເອົາມັນມາ ສ້າງສາ ໃນສິ່ງທີ່ເປັນສາທາຣະນະປະໂຍດ

ມັນຈະເປັນຄວາມເສົ້າໃຈຍິ່ງທະວີ ຖ້າຫາກວ່າຂ້າພະເຈົ້າຄືນມາຢາມບ້ານ ອີກໃນສິບປີ

ທາງຫນ້າ ຍັງຈະເຫັນໂຮງຮຽນຫຼັງເກົ່າ ຄົງຢູ່ໃນສະພາບເກົ່າຈັ່ງຊີ້ອີກ

ຂ້າພະເຈົ້າຈື່ໄດ້ວ່າ ເຄີຍເວົ້ານໍາເພື່ອນຝູງຫຼາຍຄົນ ເຖິງເຣື່ອງນີ້ເມື່ອມີໂອກາດ ໃນການ

ຊຸມແຊວສຸຣາບານ ແຕ່ຄວາມຄຶດເຫັນທັງຫຼາຍ ກໍຈືດຈາງໄປນໍາການເວລາ ມີຫມູ່ຝູງຫຼາຍຄົນ ເວົ້າວ່າ "
ຫມູ່ບ້ານຂອງເຮົາບໍ່ໄດ້ຮັບການເອົາໃຈໃສ່ຈາກທາງການ " ຂ້າພະເຈົ້າຄຶດວ່າ ຜູ່ເວົ້າ ຄວາມນັ້ນ ເປັນຄົນເຫັນແກ່ໂຕ
ເຮົາເປັນຄົນລາວ ອ້າປາກອອກຄໍາໃດ ກໍວ່າໂຕນັ້ນຮັກຊາດ ຮັກຄວາມເປັນລາວ ແລ້ວໃນເມື່ອເຮົາກໍຮູ້ຖານະ
ຂອງຣັຖບານເຮົາດີຢູ່ ວ່າຍາກຈົນສໍ່າໃດ ມີ ພາຣະການຈັບຈ່າຍຢ່າງຫນັກໃຈສໍ່າໃດ ຖ້າເຮົາຊິມາມົວນັ່ງຄອຍ

ໃຫ້ແຕ່ຣັຖບານເຮັດຫມົດ ກວ່າມັນຊິທົ່ວເຖິງ ມັນກໍຄົງເປັນການນອນຕື່ນສວາຍເສັຽແລ້ວ ໂດຍບໍ່ຕ້ອງສົງໄສ

ປີກາຍນີ້ ນາຍຄູຜູ່ນຶ່ງຊຶ່ງຂ້າພະເຈົ້າຍອມຮັບນັບຖື ວ່າເປັນບຸກຄົນທີ່ຄວນແກ່ການ ຍົກຍ້ອງ ເຖິງຈະຫນຸ່ມນ້ອຍ ແຕ່ກໍນັບວ່າເປັນຜູ່ມີ ຄວາມຄິດກ້າວຫນ້າ.

ປີກາຍນີ້ ນາຍຄູຜູ່ນັ້ນ ຊັກຊວນ ແລະ ນຳພາໄທບ້ານອອກແຮງກັນໄປຕັດໄມ້ມາໄວ້ ໂດຍມີໂຄງການ ຈະປຸກໂຮງຮຽນຫຼັງໃຫມ່ຂຶ້ນ ເຂົາກໍເປັນຜູ່ນຶ່ງ ທີ່ອອກເຫື່ອເທແຮງນຳ ຢ່າງເອົາ ຈິງ ເອົາຈັງ ຈົນຂອນໄມ້ກົ້ງທັບຂາ ຈົນວ່າຂາຫັກ ໄທບ້ານໂຮມໃຈກັນຕໍ່ໄປ ໃນຂນະທີ່ເຂົານອນ ເຂົ້າເຝືອກຢູ່ໂຮງຫມໍ ໄດ້ເສົາຂນາດໃຫຽ່ຢ່າງງາມ ເຖິງຊາວສີ່ຕົ້ນ ແລະ ໄດ້ໄມ້ຂອນ ແຕ່ພໍເຂົາ ອອກຈາກໂຮງຫມໍ ກໍຖືກຍ້າຍໄປຢູ່ບ້ານອື່ນ ບ້ານເຮົາໄດ້ມີໂອກາດ ຕ້ອນຮັບນາຍຄູຜູ່ໃຫມ່ ທີ່ຫາກໍຮຽນຈົບອອກມາ

ຂ້າພະເຈົ້າດີໃຈ ເມື່ອໄດ້ຮູ້ວ່າ ຜູ່ໃຫມ່ທີ່ຫາກວ່າແຕ່ອອກຈາກສຖາບັນການສຶກສາວິຊາ ຄູຄົງໂດກມາສິດ ໆ ຮ້ອນ ໆ ນີ້ແມ່ນ ນາງແພງສີ ລູກສາວຫຼ້າຂອງແມ່ປ້າອ່ຳ ບ້ານເຫນືອຂອງ ເຮົານີ້ເອງ ເປັນຫຽັງຊິບໍ່ດີໃຈ ເມື່ອໄດ້ໄທກັນເອງມາເປັນເຈົ້າເປັນນາຍ ຊ້ຳແພງສີກັບຂ້າພະເຈົ້າ ກລ້ຽງແກ່ນກັນປານນ້ອງປານອ້າຍ ຂ້າພະເຈົ້າດີໃຈ ເມື່ອຄິດດ້ວຍຄວາມຫວັງອັນຈົບງາມວ່າ ແພງສີ ຊຶ່ງຮັກບ້ານເກີດຂອງຕົນ ຄົງມີຄວາມ ຄິດຢາກສ້າງຢາກແປງໃຫ້ມັນຈົບດີມີຫນ້າ

ແຕ່ແລ້ວຄວາມດີໃຈຂອງຂ້າພະເຈົ້າ ກໍປ່ຽນມາເປັນຄວາມເສົ້າໃຈ ເມື່ອເຫຼືອດຕາໄປ ພໍ້ ກັບເສົາຊາວສີ່ຕົ້ນ ທີ່ຍັງກອງຢູ່ບ່ອນເກົ່າ ເມື່ອພົບວ່າຂອນໄມ້ ທີ່ນາຍຄູຜູ່ເກົ່າຊັກຊວນໄທບ້ານ ຕັດແລ້ວຊ່ອຍກັນ ເອົາກວຽນລາກມາ ແກ່ນມາກອງໄວ້ເດີ່ນໂຮງຮຽນນັ້ນ ຍັງເປັນຂອນໄມ້ຢູ່ຄືເກົ່າ

ຂ້າພະເຈົ້າບໍ່ຂັບຣົຖຕໍ່ ໄປອີກແລ້ວ ແຕ່ວ່າຈອດມັນໄວ້ ຫນ້າໂຮງຮຽນ ແລ້ວນັ້ງສົງບສຕິ ອາຣົມ ເພື່ອໄວ້ອາລັຍໃຫ້ແກ່ຄວາມເກົ່າຂອງໂຮງຮຽນ ໄວ້ອາລັຍແກ່ນາຍຄູ ຜູ່ເຖົ້າທີ່ຂຈາກໂລກ ໄປແລ້ວ ເພື່ອສຳນຶກເຖິງບຸນຄຸນຂອງເພິ່ນ ຂ້າພະເຈົ້າຄຶດຮອດບົດຮຽນແຕ່ເກົ່າ ໆ ທີ່ເພິ່ນ ໃຫ້ເລົ່າ ຂຶ້ນໃຈ ຈື່ໄດ້ວ່າ

*" ບຸນຄຸນຂອງຄູ ເພິ່ນອີ່ດູລູກສິດທຸກສ່ຳ ເພິ່ນໃຫ້ຮ່ຳຮຽນ ຮູ້ວິຊາ... "*

*ພູ້ນແພງສີ ສາວນາຍຄູເດັກນ້ອຍບ້ານເຮົາ ຍ່າງປີ້ນມາກັບເດັກນ້ອຍ ລູກສິດ ຊຶ່ງລາງຄົນກໍນຸ່ງເສື້ອບໍ່ມີກະດຸມ* ເຂົາພາກັນແລ່ນ ຊ່ວງກັນອອກໄປ ທຸກທິດທາງເພື່ອກັບຄືນສູ່ປ້າວເຮືອນ

ຄູບາອິງນຶ່ງ ຍ່າງຜ່າຂີ້ຝຸ່ນໄງ່ຕີນເດັກນ້ອຍຫມູ່ນັ້ນ ໄປຢ່າງສົງບສ່ຽມ ສີຜ້າຄຸມເຫຼືອງຮຸ່ງຢູ່ກາງຂີ້ໄງ່ ທີ່ເກີດຈາກການແລ່ນຊ່ວງກັນ ແລະ ຢອກລໍ້ ກັນຂອງເດັກນ້ອຍ ມັນເປັນພາບທີ່ ຊວນສັງເວດຍິ່ງນັກ ມັນບໍ່ຄືແຕ່ກ່ອນ ປາງເມື່ອຂ້າພະເຈົ້າເປັນເດັກນ້ອຍລູກສິດ ຂ້າພະເຈົ້າຈື່ ໄດ້ວ່າ ແຕ່ກ່ອນເຮົາເຫັນພຣະພິກຂຸ ກ້າວຍ່າງມາ ພວກເຮົາພາກັນນັ່ງປ່ອງຢື ລົງພະນົມມືຂຶ້ນເຫນືອຫົວ ແລະ ເປັ່ງວາຈາ ດັງກ້ອງຢູ່ໃນໃຈວ່າ " ສາທຸ ໆ ! "

ດຽວນີ້ເດັກນ້ອຍຍັງແຕ່ເຂົາບໍ່ມາດົງຈ່ອງຜ້າຄຸມ ໃຫ້ຄູບາໄປຫຼີ້ນຝຸ່ນນຳເຂົາ.

ນາຍຄູແພງສີ ຍ່າງແອ່ມາຫາຂ້າພະເຈົ້າ ແລ້ວຖາມຂຶ້ນພ້ອມກັບຍິ້ມອັນພິມໃຈວ່າ

- ໂຫ໊ ! ແມ່ນລົມຫຼັງນໍພັດໃຫ້ຍາອ້າຍ ລອຍມາຮອດບ້ານເຮົາມື້ນີ້

ຄວາມປາກຂອງແພງສີ ບໍ່ຫວານທ່ຍິ້ມ ທີ່ຍັງບໍ່ຈາງຈືດໄປນັ້ນ

- ລົມຄຶດຮອດ !" ຂ້າພະເຈົ້າຕອບ

- ບ້ານນອກຄອກນາ ຈັ່ງຊີ້ ກໍຍັງມີແນວເປັນຕາຄຶດຮອດຢູ່ບໍ່ ?

ແພງສີຕໍ່ຄວາມລົມ ຂ້າພະເຈົ້າ ຍັງຢືນຢູ່ບ່ອນເກົ່າ ແລະ ແພງສີ ກໍຄົງຍິນດີປາກຈາ ນຳຂ້າພະເຈົ້າຈຶ່ງບໍ່ຍ່າງຫນີຈາກໄປ

ເທິງຄຶດຮອດເທິງເປັນຫ່ວງ ! " ຂ້າພະເຈົ້າ ວ່າຈັ່ງຊັ້ນດ້ວຍຄວາມຈິງໃຈ

- ບ່າ ! ແລ້ວ ບໍ່ມີຄຳວ່າຫວງກັບຫຶງ ນ້ຳອີກເບາະ ?"

- ໂອ໊ະ ! ຄຳນັ້ນບໍ່ເລີຍ ແຕ່ມີຄຳວ່າ ສັງເວດ ແລະ ເສົ້າໃຈ ໃນສິ່ງທີ່ສາຍຕາ ໄດ້ພົບພໍ້ ຢູ່ດຽວນີ້ !"

- ມີຫຍັງແດ່ ທີ່ເຮັດໃກ້ຍາອ້າຍ ສັງເວດ ແລະ ເສົ້າໃຈ ? " ແພງສີຖາມ

*- ກະລອງຫຼຽວຕາເບິ່ງກອງເສົາແລະຂອນໄມ້ ຫມູ່ນັ້ນແດ່ເປັນຫຍັງ ?*

ຂ້າພະເຈົ້າວ່າ " *ມັນພ້ອມທີ່ຈະປຸ່ງນສພາບມາເປັນໂຮງຮຽນຫຼັງໃຫມ່ ຢ່າງງ່າຍ ດາຍ ຈົບງາມ ແລະ ແຫນ້ນຫນາຖາວອນ ຖ້າຫາກວ່າ ພວກເຮົາຊິເອົາໃຈ ໃສ່ ຕັດຮອນມັນ ເລື່ອຍບັກບາກມັນທີ່ນັ້ນລະ "*

- ຍາອ້າຍເວົ້າຄືນິຍາຍແທ້ ທາງກະຊວງບໍ່ອະນຸມັດມາໃຫ້ ຊິເອົາເງິນໃສມາຈ້າງຄົນ

ເລື່ອຍ ມາຈ້າງຊ່າງປຸກ ?

- ອ້າວ ແລ້ວຊັ້ນແມ່ນໃຜເອົາເງິນໄປຈ້າງຄົນຕັດ ຄົນລາກມັນມາກອງຢູ່ເດີ່ນ

ໂຮງຮຽນນີ້ລະ ?"

- ກະໄທບ້ານເຮົານີ້ລະ ລົງແຂກກັນ !

- ແລ້ວແມ່ນໃຜລະ ນຳພາເຂົາເຈົ້າ ? " ຂ້າພະເຈົ້າຖາມອີກ

-ດີເຮັກເຕີ້ ພູ່ເກົ່າ ດຽວນີ້ເພິ່ນຍ້າຍໄປແລ້ວ !"

- ແລ້ວ ດຽວນີ້ໃຜເປັນດີເຮັກເຕີ້ ?"

- ກະ ເອີ້ ແພງນີ້ລະ !"ແພງສີຕອບອາຍ ໆ

- ອ້າວແລ້ວ ແພງສີ ບໍ່ຄຶດສ້າງຕໍ່ໃຫ້ສຳເລັດບໍ່ ? ເຂົາເປັນໄທອື່ນ ເຂົາຍັງສາມາດຈູງໃຈ

ໄທບ້ານເຮົາໃຫ້ລົງມືລົງແຮງໄດ້ ແລ້ວແພງສີກໍເປັນລູກບ້ານນີ້ ເກີດຢູ່ບ້ານນີ້ ພໍ່ແມ່ພີ່ນ້ອງກໍຢູ່ ຫນີ້
ໄທບ້ານເຮົາຮູ້ຈັກຮັກແກ່ນແພງສີ ແຫ່ງໄດ້ມາເປັນດີເຮັກເຕີ້ ພວກໄທບ້ານກໍຍິ່ງຍອມ ຮັບນັບຖືຢູ່ແລ້ວ
ອ້າຍວ່າພຽງແຕ່ອ້າປາກຂຶ້ນທີ່ນັ້ນລ່ະ ເຈົ້າກໍຈະໄດ້ຮັບ ຄວາມຮ່ວມໄມ້ ຮ່ວມມື ເປັນຢ່າງດີ ແພງສີຫຸບປາກໄວ້ເຮັດຫຍັງ ?

ຫຼືວ່າຣັຖບານຈ່າຍເງິນເດືອນເປັນຄ່າຈ້າງມາສອນເດັກນ້ອຍ ກໍຊິຫມົ້ນສອນ ແຕ່ເດັກນ້ອຍ ໃຫ້ມັນລືມກັບເງິນເດືອນຊັ້ນເບາະ ? "

-ຍາອ້າຍ ຊິມາຮ້າຍ ມາວ່າ ແພງເຮັດຫຍັງ ? ແພງເປັນແມ່ຍິງ ແລ້ວກະຫາອອກມາ ເຮັດການ ຍັງໃຫມ່ຕ່ອງກ ຍັງບໍ່ກ້າອອກປາກ ໃນສິ່ງໃຫຽຫຼວງ ຈັ່ງຊັ້ນດອກ !

- ຍັງໃຫມ່ນັ້ນລະດີ ຊິໄດ້ມີຊື່ວ່າ ຮັກວຽກ ຮັກຫນ້າທີ່ ຮັກອາຊີບຄູ !

*- ແພງເຄີຍຄຶດຄືກັນ ແຕ່ບໍ່ກ້າອອກປາກ* ຢ້ານມັນບໍ່ໄດ້ຜົນ ຢ້ານບໍ່ມີຄົນ ເຊື່ອຖື ຢ້ານຜູ່ເຖົ້າຜູ່ແກ່ຫົວຂັນ !

- ຊັ້ນກໍດີແລ້ວ ຖ້າແພງບອກວ່າເຄີຍຄຶດ ຕໍ່ໄປນີ້ແພງຊິຕ້ອງລືມມືເລີຍ ອ້າຍນີ້ລະຊິ ເປັນຜູ່ທໍາອິດທີ່ອອກສຽງສນັບສນູນ ແລະ ເປັນກໍາລັງໃຈ ຖ້າແພງຍັງເຊື່ອຖືອ້າຍໃນຖານະ ທີ່ອະວຸໂສກວ່າ ກໍຈົ່ງເຊື່ອວ່າອ້ານນີ້ລະຈະເປັນແຮງນຶ່ງນອກຈາກແຮງຂອງແພງ ແລະ ຊິເປັນ ສຽງນຶ່ງເພື່ອຊ່ອຍສຽງ ຂອງແພງໃຫ້ດັງຂຶ້ນ ອ້າຍມາຖ້ຽວນີ້ ກະວ່າຊິຢູ່ຈັກເດືອນນຶ່ງ ຫວັງວ່າ ຈະມີເວລາຊ່ອຍເວົ້າ ຊ່ອຍແຮງໃນຂັ້ນທໍາອິດ ເພື່ອໃຫ້ວຽກການ ກ້າວຫນ້າໄປດ້ວຍດີ !

- ໂອ້ ! ຊັ້ນກະດີລະຕີ ມື້ອື່ນນີ້ ຂໍໂທດເດີ ຂໍເລົ່າກັບຫນີ້ເລີຍ ຄືວ່າແພງເຮັດບຸນ ຂຶ້ນ ເຮືອນໃຫມ່ ຍາອ້າຍຕ້ອງໄປໃຫ້ໄດ້ເດີ ແພງຂໍຊີເນ ຂອງກົມຖແລງຂ່າວ ມາງັນນໍາ !"

- ແນ່ນອນ ອ້າຍຕ້ອງໄປ ແລ້ວເຮົາຊິຖືໂອກາດ ທີ່ພວກໄທບ້ານ ມາໂຮມກັນນີ້ລະ ເວົ້າຍັ່ງສຽງໄທບ້ານວ່າ ຊິພ້ອມພຽງກັນດີບໍ່ ໃນເຣື່ອງ ທີ່ພວກເຮົາເວົ້າກັນມື້ນີ້

- ເອີ ເອີາຈັ່ງຊັ້ນກໍໄດ້ ແຕ່ວ່າໃຫ້ຍາອ້າຍເປັນຜູ່ເວົ້າເດີ້ !

ທີ່ສຸດແພງສີ ກໍໂຍນພາຣະອັນຫນັກ ມາໃຫ້ຂ້າພະເຈົ້າຈົນໄດ້ ແຕ່ມັນກໍເປັນຄວາມ ພູມໃຈ ຂອງຂ້າພະເຈົ້າ

*ຂ້າພະເຈົ້າຈະເວົ້າໃຫ້ສຸດຝີປາກ ເພື່ອຈູງໃຈຊາວບ້ານ ໃຫ້ຊ່ອຍກັນ ສ້າງບ້ານແປງເມືອງ*

*ຂ້າພະເຈົ້າ ຈະເວົ້າໃຫ້ສົມກັບທີ່ໃຈຄຶດຮອດຄວາມຫຼັງ ຂອງບ້ານ ເມືອງ* ເພື່ອຈະປຸ່ງນຈາກການຫຼັບຝັນ ຂອງຄົນໃນຊາດ ໃຫ້ຕື່ນມືນຕາຂື້ນມາ ຮ່ວມໃຈ ຮ່ວມແຮງກັນ ສ້າງສາ ພັທນາ

ຂ້າພະເຈົ້າລາຈາກແພງສົມາມື້ນັ້ນ ພ້ອມກັບຄຶດຫາຖ້ອຍຄຳທີ່ເໝາະສົມ ເພື່ອກວ່າ ໃຫ້ເປັນທາງຈູງໃຈຊາວບ້ານ

ຂ້າພະເຈົ້າຄຶດວ່າ ຈະຂື້ນຕົ້ນຢ່າງຈັບໃຈວ່າ ....

*" ພໍ່ແມ່ພີ່ນ້ອງລາວ ຜູ່ຮັກຊາດທັງຫຼາຍ....*

*ຂ້າພະເຈົ້າ ຢາກຊວນ ໃຫ້ພວກເຮົາສົງບໃຈຈັກບຶດນຶ່ງ ຄຶດທົບທວນ ເຖິງບ້ານເມືອງທີ່ຮັກຍິ່ງຂອງເຮົາ ພວກເຮົາມາພາກັນຄຶດຮອດວ່າ ແຕ່ ກ່ອນ ເຮົາເປັນເມືອງຂື້ນ ເສັຽການປົກຄອງໃຫ້ຕ່າງດ້າວ* ເຂົາຜູ່ກົດຂີ່ເຮົາ ເຄີຍບີບເຕັງ ກະເກນເອົາເຫື່ອແຮງຂອງເຮົາ ໄປເຮັດວຽກຫຼວງ ໂດຍເຮົາບໍ່ໄດ້ເຕັມໃຈ ແຕ່ວ່າຜົນຂອງມັນ ກໍຍັງດີທີ່ວ່າ ເຮົາໄດ້ມີເສັ້ນທາງຄະມະນາຄົດຕໍ່ກັນ....

ແລ້ວບັດນີ້ ເຮົາເປັນເອກຣາຊ ເປັນໂຕຂອງເຮົາເອງ ເຮົາມາຊ່ອຍກັນກະເກນ ເອົາກຳລັງເຫື່ອແຮງ ຂອງພວກເຮົາເອງ ຮວມກັນໃຫ້ເປັນສາມັກຄີ ສ້າງບ້ານເມືອງຂອງເຮົາ ເພື່ອໂຕຂອງພວກເຮົາ

ເມື່ອເຮົາມາຫຼຽວເບິ່ງຢ່າງພິນິດພິຈາຣະນາແລ້ວ ການສຶກສາຮ່ຳຮຽນ ຂອງຍຸວະຊົນ ໃນຊາດ ຄວນທີ່ເຮົາຈັກຕ້ອງສົ່ງເສີມ ຄວບຄູ່ກັນໄປ ພ້ອມກັບການປັບປຸງສັມມາອາຊີບ....

ຂ້າພະເຈົ້າຄຶດ ແລ້ວຍ່າງມາຂຶ້ນຣົຖ ແລະນັ່ງຄຶດຕໍ່ໄປ ເຖິງອະນາຄົດ ຂອງຫມູ່ບ້ານ ທີ່ຈະມີໂຮງຮຽນງາມ ໂຮງຮຽນສອາດ ອັນເປັນຜົນງານຂອງ ໄທບ້ານ ມັນຄົງເປັນສິ່ງເຊີດຫນ້າຊູຕາ ຫມູ່ບ້ານຂອງເຮົາ ແລະ ແພງສີ ກໍຄົງໄດ້ຊື່ວ່າ ເປັນແມ່ພິມຂອງຊາດ ທີ່ອະນຸຊົນ ຄົນຮຸ່ນຫຼັງ ຈະເທີດທູນໄປ ຫຼາຍເຊັ່ນຄົນ

ໂອ່ແພງສີ ! ຄູສາວຜູ່ອ່ອນຫວານ ແລະ ເຂັ້ມແຂງຂອງໄທບ້ານ

ຂ້າພະເຈົ້າຄຶດຮອດແພງສີ ແລະ ຄຶດວ່າຖ້າໂຮງຮຽນຫຼັງໃຫມ່ ເປັນຮູບເປັນຮ່າງຂຶ້ນມາແລ້ວ ຂ້າພະເຈົ້າຈະຈັດເຖົ້າແກ່ ໄປສູ່ຂໍກໍຄົງຈະດີ ປ່າງຫນ້ອຍ ກໍໄດ້ຊື່ວ່າເປັນຜູ່ຮັກຊາດ ຮັກບ້ານເກີດເມືອງນອນຄືກັນ ແລະ ເຂົ້າໃຈກັນ

ແມ່ນລະ ຂ້າພະເຈົ້າ ຄວນຊິສົ່ງສາມເຖົ້າສີ່ແກ່ໄປ ຂໍແພງສີ....